**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 1977----/ຮສສ

ນະຄອນຫຼວງວຽງຈັນ, ວັນທີ 19/07/18

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນສັງຄົມສົງເຄາະ

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ແຮງງານ ແລະ ສະຫວັດດີການ ສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມດຳລັດວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 169/ລບ, ລົງວັນທີ 19 ມິຖຸນາ 2013.

**ລັດຖະມົນຕີ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການໃນການສ້າງຕັ້ງ, ນຳໃຊ້, ຄຸ້ມຄອງ ແລະ ກວດກາ ກອງທຶນສັງຄົມສົງເຄາະ ເພື່ອແນໃສ່ການສ້າງກອງທຶນໃຫ້ເຕີບໃຫຍ່ຂະຫຍາຍຕົວ ຮັບປະກັນການຊ່ວຍເຫຼືອສັງຄົມສົງເຄາະ ຢ່າງວ່ອງໄວ, ມີປະສິດທິຜົນ, ຍຸຕິທຳ, ໂປ່ງໃສ ແລະ ທົ່ວເຖິງ.

**ມາດຕາ 2 ກອງທຶນສັງຄົມສົງເຄາະ**

ກອງທຶນສັງຄົມສົງເຄາະ ຂຽນຫຍໍ້ " ກສສຄ " ແມ່ນກອງທຶນ ເພື່ອນຳໃຊ້ເຂົ້າໃນການຊ່ວຍເຫຼືອ ແລະ ການບໍລິການ ໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດໃນສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ສັງຄົມ ໝາຍເຖິງການພົວພັນລະຫວ່າງຄົນກັບຄົນ, ກຸ່ມຄົນ, ຊຸມຊົນ ຫຼື ການຈັດຕັ້ງໃນສັງຄົມ;
2. ສົງເຄາະ ໝາຍເຖິງການໃຫ້ການຊ່ວຍເຫຼືອ ແລະ ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການ ທາງດ້ານວັດຖຸ ແກ່ກຸ່ມເປົ້າໝາຍ;
3. ດ້ອຍໂອກາດ ໝາຍເຖິງການຂາດເງື່ອນໄຂໃນການເຂົ້າເຖິງບໍລິການດ້ານການສຶກສາ, ວິຊາຊີບ, ການ ປິ່ນປົວສຸຂະພາບ, ສະບຽງອາຫານ, ເຄື່ອງໃຊ້ສອຍ, ທີ່ຢູ່ອາໄສ ແລະ ການໃຫ້ຄຳປຶກສາທາງດ້ານຈິດໃຈ;
4. ໄພພິບັດ ໝາຍເຖິງໄພອັນຕະລາຍທີ່ເກີດຂຶ້ນຈາກທຳມະຊາດ ແລະ ການກະທຳຂອງມະນຸດ ເຊັ່ນ: ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວ, ໝາກເຫັບຕົກ, ດິນເຈື່ອນ, ແຜ່ນດິນໄຫວ, ພູເຂົາໄຟລະເບີດ ເຊິ່ງໄດ້ເກີດຂຶ້ນ ແລະ ໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ,ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ;

5. ການຊ່ວຍເຫຼືອສຸກເສີນໝາຍເຖິງການດຳເນີນການຊ່ວຍເຫຼືອ ແລະ ບໍລິການໃຫ້ແກ່ກຸ່ມເປົ້າໝາຍໃນເວລາປະສົບໄພພິບັດ;
6. ວັດຖຸທີ່ໃຊ້ໃນການສົງເຄາະ ໝາຍເຖິງສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ສິ່ງປຸກສ້າງ ແລະ ເຄື່ອງມືປະກອບອາຊີບ.

**ມາດຕາ 4 ທີ່ຕັ້ງຂອງກອງທຶນ**

ທີ່ຕັ້ງກອງທຶນສັງຄົມສົງເຄາະ ມີດັ່ງນີ້:
1. ຂັ້ນສູນກາງ ຕັ້ງຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍແມ່ນກົມສັງຄົມສົງເຄາະ ເປັນໃຈກາງໃນການຄຸ້ມຄອງ;
2. ຂັ້ນແຂວງ ຕັ້ງຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫຼວງ ໂດຍແມ່ນຂະແໜງສັງຄົມສົງເຄາະ ເປັນໃຈກາງໃນການຄຸ້ມຄອງ;
3. ຂັ້ນເມືອງ ຕັ້ງຢູ່ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ນະຄອນ ໂດຍແມ່ນໜ່ວຍງານສັງຄົມສົງເຄາະ ເປັນໃຈກາງໃນການຄຸ້ມຄອງ.

**ມາດຕາ 5 ຫຼັກການ ຂອງກອງທຶນສັງຄົມສົງເຄາະ**

ກອງທຶນສັງຄົມສົງເຄາະ ປະຕິບັດຕາມຫລັກການ ດັ່ງນີ້:
1. ຮັບປະກັນ ການຊ່ວຍເຫຼືອສັງຄົມສົງເຄາະແກ່ກຸ່ມເປົ້າໝາຍຢ່າງວ່ອງໄວ ແລະ ທົ່ວເຖິງ;
2. ຮັບປະກັນການມີສ່ວນຮ່ວມຂອງສັງຄົມ ໃນການພັດທະນາກອງທຶນໃຫ້ເຕີບໃຫຍ່ຂະຫຍາຍຕົວ;
3. ຮັບປະກັນການຄຸ້ມຄອງຢ່າງເປັນເອກະພາບ, ແບ່ງຂັ້ນຄຸ້ມຄອງ, ມີຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ຖືກຕ້ອງຕາມກົດໝາຍ.

**ໝວດທີ 2**

**ແຫຼ່ງລາຍຮັບ, ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນສັງຄົມສົງເຄາະ**

**ມາດຕາ 6 ແຫຼ່ງລາຍຮັບກອງທຶນສັງຄົມສົງເຄາະ**

ກອງທຶນສັງຄົມສົງເຄາະ ປະກອບດ້ວຍເງິນສົດ ແລະ ວັດຖຸ ຊຶ່ງໄດ້ມາຈາກ:
1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
3. ການລະດົມທຶນ ທີ່ຖືກຕ້ອງຕາມກົດໝາຍ;
4. ແຫຼ່ງລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 7 ການຄຸ້ມຄອງເງິນກອງທຶນສັງຄົມສົງເຄາະ**

ກອງທຶນສັງຄົມສົງເຄາະ ທີ່ເປັນເງິນສົດ ຕ້ອງເປີດບັນຊີເງິນຝາກຢູ່ຄັງເງິນແຫ່ງຊາດປະຈຳແຕ່ລະທ້ອງຖິ່ນຕາມລະບຽບການຂອງກະຊວງການເງິນວາງອອກ ໂດຍແມ່ນ ຂະແໜງການ ແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຖືບັນຊີ.

**ມາດຕາ 8 ການຄຸ້ມຄອງວັດຖຸກອງທຶນສັງຄົມສົງເຄາະ**

ກອງທຶນສັງຄົມສົງເຄາະ ທີ່ເປັນວັດຖຸ ແມ່ນຄຸ້ມຄອງຕາມລະບົບສາງ ເພື່ອຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ເບີກຈ່າຍທັນສະພາບການ ໂດຍແມ່ນ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຄຸ້ມຄອງ.

**ມາດຕາ 9 ການນຳໃຊ້**

ກອງທຶນສັງຄົມສົງເຄາະນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ນຳໃຊ້ເຂົ້າໃນການຊ່ວຍເຫຼືອສັງຄົມສົງເຄາະ ເປັນຕົ້ນ: ສະໜອງວັດຖຸ-ອຸປະກອນສົມທົບປຸກສ້າງ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ເງິນອຸດໜູນ ໃຫ້ແກ່ກຸ່ມເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງດຳລັດວ່າດ້ວຍວ່າດ້ວຍສັງຄົມສົງເຄາະ.
2. ນຳໃຊ້ເຂົ້າໃນວຽກງານບໍລິຫານ ເປັນຕົ້ນ: ການເກັບກຳຂໍ້ມູນກຸ່ມເປົ້າໝາຍສັງຄົມສົງເຄາະຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງດຳລັດວ່າດ້ວຍວ່າດ້ວຍສັງຄົມສົງເຄາະ ແລະ ສິ່ງຈຳເປັນທີ່ຕິດພັນກັບວຽກງານສັງຄົມສົງເຄາະ.

**ມາດຕາ 10 ຜູ້ມີສິດສັ່ງຈ່າຍກອງທຶນສັງຄົມສົງເຄາະ**

ຜູ້ມີສິດອະນຸມັດສັ່ງຈ່າຍກອງທຶນສັງຄົມສົງເຄາະ ມີດັ່ງນີ້:

1. ຂັ້ນສູນກາງ ແມ່ນລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຫຼື ຜູ້ຖືກມອບສິດ;
2. ຂັ້ນແຂວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫຼື ຜູ້ຖືກມອບສິດ;
3. ຂັ້ນເມືອງ ແມ່ນເຈົ້າເມືອງ, ເຈົ້ານະຄອນ ຫຼື ຜູ້ຖືກມອບສິດ.

## ໝວດທີ 3
## ການຊ່ວຍເຫຼືອສັງຄົມສົງເຄາະ

**ມາດຕາ 11 ການຊ່ວຍເຫຼືອສັງຄົມສົງເຄາະ**

ຜູ້ທີ່ຈະໄດ້ຮັບການຊ່ວຍເຫຼືອສັງຄົມສົງເຄາະ ມີເປົ້າໝາຍ ແລະ ເງື່ອນໄຂ ດັ່ງນີ້:

1. ເດັກກຳພ້າ, ກຳພອຍ ອາຍຸຕ່ຳກວ່າ 18 ປີ, ຂາດທີ່ຢູ່ອາໄສ, ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກ ຈະໄດ້ຮັບການຊ່ວຍເຫຼືອສັງຄົມສົງເຄາະ ທີ່ຈຳເປັນຢ່າງໜ້ອຍ ດັ່ງນີ້:
   - ເຂົ້າສານ 12 ກິໂລ/ຄົນ/ເດືອນສູງສຸດບໍ່ເກີນ 3 ເດືອນ;
   - ເຄື່ອງນຸ່ງຫົ່ມເຊັ່ນ: ເສື້ອ,ໂສ້ງ ຫຼື ສິ້ນ ຜູ້ລະ 1 ຊຸດ;
   - ກໍລະນີມີຄວາມຈຳເປັນທາງດ້ານທີ່ຢູ່ອາໄສ ຈະໄດ້ຮັບສັງກະສີ 40 ແຜ່ນ, ເຫຼັກຕະປູ 5 ກິໂລ;
   - ຊ່ວຍເຫຼືອສິ່ງທີ່ຈຳເປັນຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ບົນພື້ນຖານທີ່ໄດ້ກຳນົດໃນໝວດທີ 3 ຂອງດຳລັດວ່າດ້ວຍສັງຄົມສົງເຄາະ.
2. ຜູ້ພິການທາງດ້ານຮ່າງກາຍ ຫຼື ມັນສະໝອງ ບໍ່ສາມາດກຸ້ມຕົນເອງໄດ້ ທີ່ຂາດຜູ້ດູແລ ຫຼື ອາໄສຢູ່ນຳຄອບຄອບຄົວທີ່ທຸກຍາກ ຈະໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນຢ່າງໜ້ອຍ ດັ່ງນີ້:
   - ເຂົ້າສານ 12 ກິໂລ/ຄົນ/ເດືອນສູງສຸດບໍ່ເກີນ 3 ເດືອນ;
   - ເຄື່ອງນຸ່ງຫົ່ມເຊັ່ນ: ເສື້ອ,ໂສ້ງ ຫຼື ສິ້ນ ຜູ້ລະ 1 ຊຸດ;
   - ກໍລະນີມີຄວາມຈຳເປັນທາງດ້ານທີ່ຢູ່ອາໄສ ຈະໄດ້ຮັບສັງກະສີ 40 ແຜ່ນ, ເຫຼັກຕະປູ 5 ກິໂລ;
   - ຊ່ວຍເຫຼືອສິ່ງທີ່ຈຳເປັນຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ບົນພື້ນຖານທີ່ໄດ້ກຳນົດໃນໝວດທີ 3 ຂອງດຳລັດວ່າດ້ວຍສັງຄົມສົງເຄາະ.
3. ຜູ້ອາຍຸສູງທີ່ມີອາຍຸ ແຕ່ 60 ປີ ຂຶ້ນໄປ ທີ່ບໍ່ຽວພອຍ, ທຸກຍາກ ຫຼື ອາໄສຢູ່ນຳຄອບຄົວທີ່ທຸກຍາກຈະໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນຢ່າງໜ້ອຍ ດັ່ງນີ້:
   - ເຂົ້າສານ 12 ກິໂລ/ຄົນ/ເດືອນສູງສຸດບໍ່ເກີນ 3 ເດືອນ;
   - ເຄື່ອງນຸ່ງຫົ່ມເຊັ່ນ: ເສື້ອ,ໂສ້ງ ຫຼື ສິ້ນ ຜູ້ລະ 1 ຊຸດ;
   - ກໍລະນີມີຄວາມຈຳເປັນທາງດ້ານທີ່ຢູ່ອາໄສ ຈະໄດ້ຮັບສັງກະສີ 40 ແຜ່ນ, ເຫຼັກຕະປູ 5 ກິໂລ;
   - ຊ່ວຍເຫຼືອສິ່ງທີ່ຈຳເປັນຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ບົນພື້ນຖານທີ່ໄດ້ກຳນົດໃນໝວດທີ 3 ຂອງດຳລັດວ່າດ້ວຍສັງຄົມສົງເຄາະ.

4. ຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ທຸກຍາກ ຫຼື ເປັນພະຍາດຕິດແປດ ທີ່ເປັນອັນຕະລາຍຕໍ່ສຸຂະ ສຸຂະພາບ ແລະ ຊີວິດ ຈະໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນຢ່າງໜ້ອຍ ດັ່ງນີ້:
   - ເຄື່ອງບໍລິໂພກ ປະຈຳວັນ ໃນໄລຍະຢູ່ສູນຊົ່ວຄາວ ລວມມູນຄ່າທັງໝົດບໍ່ໃຫ້ເກີນ 25.000 ກີບ/ຄົນ/ມື້ ສູງສຸດບໍ່ເກີນ 7 ວັນ;
   - ຄ່າເດີນທາງ, ກິນຢູ່ພັກເຊົາ ໃນໄລຍະນຳສົ່ງໃຫ້ຄອບຄົວ, ຍາດພີ່ນ້ອງ ຫຼື ສູນຕ່າງໆ ທີ່ກ່ຽວຂ້ອງ ຕາມຄວາມເປັນຈິງ ໂດຍອີງໃສ່ລະບຽບການຂອງລັດເປັນພື້ນຖານ;
   - ຊ່ວຍເຫຼືອສິ່ງທີ່ຈຳເປັນຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ບົນພື້ນຖານທີ່ໄດ້ກຳນົດໃນໝວດທີ 3 ຂອງດຳລັດວ່າດ້ວຍສັງຄົມສົງເຄາະ.
5. ບຸກຄົນ ຫຼື ຄອບຄົວ ທີ່ປະສົບເຄາະຮ້າຍຈາກໄພພິບັດ ຈະໄດ້ຮັບການຊ່ວຍເຫຼືອສຸກເສີນ ແລະ ຊ່ວຍເຫຼືອເພື່ອການຟື້ນຟູ ດັ່ງນີ້:

ກ. ຊ່ວຍເຫຼືອສຸກເສີນ:

1). ຈັດຫາສະຖານທີ່ພັກຊົ່ວຄາວທີ່ປອດໄພ;

2). ສະໜອງຜ້າເຕັ້ນ ຫຼື ທີ່ຢູ່ອາໄສຊົ່ວຄາວ;

ໃນກໍລະນີຍົກຍ້າຍໄປຢູ່ເຂດປອດໄພ ຫຼື ຜູ້ທີ່ຖືກຕົກຄ້າງຢູ່ພື້ນທີ່ໄພພິບັດ ຈະໄດ້ຮັບການຊ່ວຍເຫຼືອເຂົ້າສານ, ອາຫານແຫ້ງ, ນ້ຳດື່ມ,ນ້ຳໃຊ້ ລວມມູນຄ່າບໍ່ເກີນ 15.000 ກີບ/ຄົນ/ມື້.

ຂ. ການຊ່ວຍເຫຼືອ ເພື່ອການຟື້ນຟູ:

1). ເຮືອນຢູ່ຖືກເສຍຫາຍ ທີ່ບໍ່ສາມາດຢູ່ໄດ້ຍ້ອນຖືກໄຟໃໝ້, ນ້ຳໄຫຼຊຸ, ລົມພັດ ຫຼື ດິນເຈື່ອນທັບຖົມຈະໄດ້ຮັບການຊ່ວຍເຫຼືອອຸປະກອນສົມທົບປຸກສ້າງທີ່ຈຳເປັນ ດັ່ງນີ້:
   - ຄອບຄົວແຕ່ 1- 4 ຄົນ ຈະໄດ້ຮັບສັງກະສີ 40 ແຜ່ນ, ເຫຼັກຕະປູ 5 ກິໂລ/ຄອບຄົວ;
   - ຄອບຄົວແຕ່ 5-7 ຄົນ ຈະໄດ້ຮັບສັງກະສີ 50 ແຜ່ນ, ເຫຼັກຕະປູ 10 ກິໂລ/ຄອບຄົວ;
   - ຄອບຄົວແຕ່ 8 ຄົນຂຶ້ນໄປ ຈະໄດ້ຮັບສັງກະສີ 60 ແຜ່ນ, ເຫຼັກຕະປູ 15 ກິໂລ/ຄອບຄົວ.

ໃນກໍລະນີເຄື່ອງໃຊ້ໃນຄົວເຮືອນທີ່ຈຳເປັນ ຫາກຖືກເສຍຫາຍ ນອກຈາກຈະໄດ້ຮັບການຊ່ວຍເຫຼືອອຸປະກອນສົມທົບປຸກສ້າງຂ້າງເທິງນີ້ແລ້ວ, ຍັງຈະໄດ້ຮັບເຄື່ອງຊ່ວຍເຫຼືອ ດັ່ງນີ້: ໝໍ້ໜຶ້ງເຂົ້າ, ໝໍ້ແກງ, ຖ້ວຍແກງ, ບ່ວງ, ຈອງ, ຖູ, ມຸ້ງ, ຜ້າຫົ່ມ, ສາດ, ເຄື່ອງນຸ່ງ ແລະ ອື່ນໆ ລວມມູນຄ່າບໍ່ເກີນ 250.000 ກີບ/ຄອບຄົວ ແລະ ເຂົ້າສານ 12 ກິໂລ/ຄົນ/ເດືອນ ສູງສຸດບໍ່ເກີນ 3 ເດືອນ.

2). ເຮືອນທີ່ສັງກະສີ ຫຼື ກະເບື້ອງມຸງຫຼັງຄາເສຍຫາຍ ຍ້ອນຖືກໄຟໃໝ້, ນ້ຳໄຫຼຊຸ, ລົມພັດ ຫຼື ດິນເຈື່ອນທັບຖົມ ເສຍຫາຍ ແຕ່ 60% ຂຶ້ນໄປ ຈະໄດ້ຮັບການຊ່ວຍເຫຼືອອຸປະກອນສົມທົບປຸກສ້າງດັ່ງນີ້:
   - ຄອບຄົວແຕ່ 1-4 ຄົນ ຈະໄດ້ຮັບສັງກະສີ 40 ແຜ່ນ, ເຫຼັກຕະປູ 5 ກິໂລ/ຄອບຄົວ;
   - ຄອບຄົວແຕ່ 5-7 ຄົນ ຈະໄດ້ຮັບສັງກະສີ 50 ແຜ່ນ, ເຫຼັກຕະປູ 10 ກິໂລ/ຄອບຄົວ;
   - ຄອບຄົວແຕ່ 8 ຄົນຂຶ້ນໄປ ຈະໄດ້ຮັບສັງກະສີ 60 ແຜ່ນ, ເຫຼັກຕະປູ 15 ກິໂລ/ຄອບຄົວ.

ໃນກໍລະນີ ຂະໜາດເຮືອນທີ່ມຸງສັງກະສີບໍ່ເກີນ 40 ແຜ່ນ ຫາກເສຍຫາຍ 60% ຂຶ້ນໄປ ແມ່ນຈະໄດ້ຮັບການຊ່ວຍເຫຼືອສັງກະສີຕາມຈຳນວນເສຍຫາຍຕົວຈິງ ແລະ ເຫຼັກຕາປູ ໄລ່ຕາມຄອບຄົວນ້ອຍ.

3). ຄອບຄົວທີ່ໄດ້ຮັບຜົນກະທົບດ້ານເນື້ອທີ່ທຳການຜະລິດ ຫຼື ຜົນຜະລິດເສຍຫາຍ 60% ຂຶ້ນໄປຍ້ອນຖືກ ນ້ຳຖ້ວມ, ສັດຕູພືດທຳລາຍ, ແຫ້ງແລ້ງ, ພະຍຸພັດ, ໝາກເຫັບຕົກ ພາຍຫຼັງເກັບກຳຂໍ້ມູນ ແລະ ປະເມີນຄວາມເສຍຫາຍແລ້ວ ຫາກເຫັນວ່າເປັນຄອບຄົວທີ່ທຸກຍາກຕາມາດຕະຖານ ທີ່ລັດຖະບານກຳນົດໃນແຕ່ລະໄລຍະ ຈະໄດ້ຮັບເຂົ້າສານ 12 ກິໂລ/ຄົນ/ເດືອນ ສູງສຸດບໍ່ເກີນ 3 ເດືອນ.

**ມາດຕາ 12 ການຊ່ວຍເຫຼືອຊາປະນະກິດສົບ**

ບຸກຄົນທີ່ຢູ່ໃນກຸ່ມເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງດຳລັດ ວ່າດ້ວຍສັງຄົມສົງເຄາະ ຫາກເສຍຊີວິດ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ ຈະໄດ້ຮັບການຊ່ວຍເຫຼືອຊາປະນະກິດສົບ ຈຳນວນ 1.500.000 ກີບ/ຄົນ.

**ມາດຕາ 13 ການສືບຕໍ່ການຊ່ວຍເຫຼືອ**

ຜູ້ທີ່ໄດ້ຮັບການຊ່ວຍເຫຼືອເຂົ້າກິນ ແລະ ເຄື່ອງນຸ່ງຫົ່ມ ຈາກກອງທຶນສັງຄົມສົງເຄາະ ໃນເບື້ອງຕົ້ນແລ້ວ, ຕ້ອງມີການປະເມີນຄືນເງື່ອນໄຂຂອງບຸກຄົນ ຫຼື ຄອບຄົວ ເພື່ອສືບຕໍ່ໃຫ້ການຊ່ວຍເຫຼືອ.

## ໝວດທີ 4
## ເອກະສານຂໍການຊ່ວຍເຫຼືອ ແລະ ອະນຸມັດນຳໃຊ້ກອງທຶນສັງຄົມສົງເຄາະ

**ມາດຕາ 14 ການປະກອບເອກະສານຂໍການຊ່ວຍເຫຼືອຂອງກຸ່ມເປົ້າໝາຍ**

ກ. ເດັກກຳພ້າ-ກຳພອຍ ປະກອບມີ:
- ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ ໂດຍມີການຢັ້ງຢືນຈາກບ້ານ;
- ໃບຢັ້ງຢືນທີ່ຢູ່;
- ໃບຢັ້ງຢືນເປັນຄອບຄົວທຸກຍາກຈາກນາຍບ້ານ ຕາມເງື່ອນໄຂທີ່ລັດຖະບານກຳນົດ;
- ໃບຢັ້ງຢືນການເສຍຊີວິດ ໃນກໍລະນີຫາກຜູ້ກ່ຽວເສຍຊີວິດ.

ຂ. ຜູ້ພິການ ປະກອບມີ:
- ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ ໂດຍມີການຢັ້ງຢືນຈາກບ້ານ;
- ໃບຢັ້ງຢືນທີ່ຢູ່;
- ໃບຢັ້ງຢືນຄວາມເປັນພິການ;
- ໃບຢັ້ງຢືນເປັນຄອບຄົວທຸກຍາກຈາກນາຍບ້ານ ຕາມເງື່ອນໄຂທີ່ລັດຖະບານກຳນົດ;
- ໃບຢັ້ງຢືນການເສຍຊີວິດ ໃນກໍລະນີຫາກຜູ້ກ່ຽວເສຍຊີວິດ.

ຄ. ຜູ້ອາຍຸສູງ ປະກອບມີ:
- ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ໂດຍມີການຢັ້ງຢືນຈາກບ້ານ;
- ໃບຢັ້ງຢືນທີ່ຢູ່;
- ໃບຢັ້ງຢືນເປັນຄອບຄົວທຸກຍາກຈາກນາຍບ້ານ ຕາມເງື່ອນໄຂທີ່ລັດຖະບານກຳນົດ;
- ໃບຢັ້ງຢືນການເສຍຊີວິດ ໃນກໍລະນີຫາກເສຍຊີວິດ.

ງ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ປະກອບມີ:
- ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;
- ໃບຢັ້ງຢືນທີ່ຢູ່;
- ໃບຢັ້ງຢືນເປັນຄອບຄົວທຸກຍາກຈາກນາຍບ້ານ ຕາມເງື່ອນໄຂທີ່ລັດຖະບານກຳນົດ;
- ໃບຢັ້ງຢືນການລະບຸຕົວຂອງຜູ້ຖືກເຄາະຮ້າຍ ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
- ໃບຢັ້ງຢືນການເສຍຊີວິດ ໃນກໍລະນີຫາກເສຍຊີວິດ.

ຈ. ການຊ່ວຍເຫຼືອຟື້ນຟູ ( ໄພພິບັດ ) ປະກອບມີ:
- ໃບຄຳຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ ໂດຍມີການຢັ້ງ

ຢືນຈາກບ້ານ;

- ໃບຢັ້ງຢືນເປັນຄອບຄົວທຸກຍາກຈາກນາຍບ້ານ ຕາມເງື່ອນໄຂທີ່ລັດຖະບານກຳນົດ;
- ແບບຟອມເກັບກຳຂໍ້ມູນຂອງຄະນະຮັບຜິດຊອບປະເມີນ;
- ໃບຢັ້ງຢືນການເສຍຊີວິດ ໃນກໍລະນີທີ່ເສຍຊີວິດ.

ໃນກໍລະນີກຸ່ມເປົ້າໝາຍສັງຄົມສົງເຄາະຂ້າງເທິງເກີດເຫດການສຸກເສີນ ແລະ ຕ້ອງການຄວາມຊ່ວຍເຫຼືອຢ່າງຮີບດ່ວນ ຜູ້ອະນຸມັດນຳໃຊ້ກອງທຶນສັງຄົມສົງເຄາະ ສາມາດພິຈາລະນາໃຫ້ການຊ່ວຍເຫຼືອໂດຍທັນທີ ຕາມການຮ້ອງຂໍການຊ່ວຍເຫຼືອເບື້ອງຕົ້ນຈາກພາກສ່ວນກ່ຽວຂ້ອງ, ຫຼັງຈາກນັ້ນ ຈຶ່ງປະກອບເອກະສານຂໍການຊ່ວຍເຫຼືອ ພ້ອມທັງຄັດຕິດບັນຊີລາຍຊື່ເຊັນຮັບຈາກຜູ້ໄດ້ຮັບການຊ່ວຍເຫຼືອ ແລະ ຢັ້ງຢືນຈາກນາຍບ້ານ.

**ມາດຕາ 15 ການປະກອບເອກະສານຂໍອະນຸມັດນຳໃຊ້**

ການຂໍອະນຸມັດນຳໃຊ້ກອງທຶນສັງຄົມສົງເຄາະ ຕ້ອງປະກອບເອກະສານ ດັ່ງນີ້:

ກ. ຂັ້ນສູນກາງ ປະກອບມີ:

1. ໜັງສືສະເໜີຂໍອະນຸມັດນຳໃຊ້ ຂອງກົມສັງຄົມສົງເຄາະ ຄັດຕິດ ໜັງສືສະເໜີຂໍການຊ່ວຍເຫຼືອຂອງແຂວງ, ນະຄອນຫຼວງ ຫຼື ໜັງສືຄຳສັ່ງຂອງຂັ້ນເທິງ ແລະ ຕາຕະລາງສັງລວມຂໍ້ມູນກຸ່ມເປົ້າ ໝາຍທີ່ຕ້ອງການຄວາມຊ່ວຍເຫຼືອ ຕາມແບບຟອມທີ່ກຳນົດ;
2. ຮ່າງຂໍ້ຕົກລົງອະນຸມັດນຳໃຊ້ຂອງລັດຖະມົນຕີ.

ຂ. ຂັ້ນແຂວງ ປະກອບມີ:

1. ໜັງສືສະເໜີຂໍອະນຸມັດນຳໃຊ້ ຂອງພະແນກ ຮສສ ແຂວງ, ນະຄອນຫຼວງ ຄັດຕິດ ໜັງສືສະເໜີຂໍການຊ່ວຍເຫຼືອຂອງເມືອງ, ເທດສະບານ, ນະຄອນ ຫຼື ໜັງສືຄຳສັ່ງຂອງຂັ້ນເທິງ ແລະ ຕາຕະລາງສັງລວມຂໍ້ມູນກຸ່ມເປົ້າໝາຍທີ່ຕ້ອງການຄວາມຊ່ວຍເຫຼືອ ຕາມຕາມແບບຟອມທີ່ກຳນົດ;
2. ຮ່າງຂໍ້ຕົກລົງອະນຸມັດນຳໃຊ້ຂອງ ເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫຼວງ;

ຄ. ຂັ້ນເມືອງ ປະກອບມີ:

1. ໜັງສືສະເໜີຂໍອະນຸມັດຈ່າຍຂອງຫ້ອງການແຮງງານ ແລະ ສະຫວັດດີການເມືອງ, ເທດສະບານ, ນະຄອນ ຄັດຕິດ ໜັງສືສະເໜີຂໍການຊ່ວຍເຫຼືອຈາກນາຍບ້ານ ຫຼື ໜັງສືຄຳສັ່ງຈາກຂັ້ນເທິງ ແລະ ຕາຕະລາງສັງລວມຂໍ້ມູນກຸ່ມເປົ້າໝາຍທີ່ຕ້ອງການຄວາມຊ່ວຍເຫຼືອ ຕາມຕາມແບບຟອມທີ່ກຳນົດ.
2. ຮ່າງຂໍ້ຕົກລົງອະນຸມັດນຳໃຊ້ຂອງ ເຈົ້າເມືອງ, ເທດສະບານ ຫຼື ນະຄອນ.

## ໝວດທີ 5
## ກວດສອບບັນຊີ ແລະ ການລາຍງານ

**ມາດຕາ 16 ການກວດສອບບັນຊີ**

ບັນຊີກອງທຶນສັງຄົມສົງເຄາະ ຈະໄດ້ຮັບການກວດສອບຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ການລາຍງານ**

ກອງທຶນແຕ່ລະຂັ້ນຕ້ອງສົ່ງບົດສະຫຼຸບການເຄື່ອນໄຫວວຽກງານກອງທຶນ ໃຫ້ການນຳຂັ້ນເທິງຂອງຕົນທຸກ 3 ເດືອນ. ສຳລັບການລາຍງານດ້ານການເງິນ ແລະ ວັດຖຸສັງຄົມສົງເຄາະ ປະຈຳປີ ຕ້ອງປະຕິບັດຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 6
## ການຍ້ອງຍໍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ການຍ້ອງຍໍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນວຽກງານກອງທຶນສັງຄົມສົງເຄາະ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ລະເມີດລະບຽບການກອງທຶນສັງຄົມສົງເຄາະ ຕາມຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບພາກສ່ວນກ່ຽວຂ້ອງດຳເນີນການຈັດຕັ້ງປະຕິບັດວຽກງານກອງທຶນສັງຄົມສົງເຄາະ ດ້ວຍຮູບການ, ວິທີການທີ່ໄດ້ກຳນົດໄວ້ ແລະ ສາມາດແຕ່ງຕັ້ງຄະນະຮັບຜິດຊອບລະດົມທຶນ ຕາມທ່າແຮງ ແລະ ເງື່ອນໄຂຂອງແຕ່ລະທ້ອງຖິ່ນ ໂດຍຖືກຕ້ອງຕາມລະບຽບກົດໝາຍ;
2. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຄຳແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍສັງຄົມສົງເຄາະ ສະບັບເລກທີ 874/ຮສສ, ລົງວັນທີ 23 ກຸມພາ 2015.

ລັດຖະມົນຕີ

ກະຊວງແຮງງານແລະສະຫວັດດີການສັງຄົມ

ລັດຖະມົນຕີ

ປອ. ຄຳແພງ ໄຊສົມແພງ